LAO ELECTRONIC TAX SYSTEM

ກົມສ່ວຍສາອາກອນ

Tax Department News

ເຖິງບັນດາທ່ານ ພະນັກງານ ທະຫານ ຕຳຫລວດ ລວມເຖິງພໍ່ແມ່ພີ່ນ້ອງປະຊາຊົນ, ຜູ້ປະກອບການທຸລະກິດ ທຸກຖ້ວນໜ້າ, ກົມສ່ວຍສາອາກອນ ກະຊວງການເງິນ ຂໍແຈ້ງຂ່າວໃຫ້ທ່ານເພື່ອຊາບວ່າ: ປະຈຸບັນກະຊວງການເງິນ ໄດ້ມອບໝາຍໃຫ້ກົມສ່ວຍສາອາກອນເປັນເຈົ້າການໃນການຄົ້ນຄວ້າ ປັບປຸງວຽກງານສ່ວຍສາອາກອນໃຫ້ທັນໄປສູ່ຄວາມທັນສະໄໝ ເພື່ອຮັບປະກັນສ້າງຄວາມສະຖຽນລະພາບໃຫ້ແກ່ການເຕີບໂຕທາງເສດຖະກິດ ແລະກຽມພ້ອມໃນການເຂົ້າເປັນສະມາຊິກອົງການການຄ້າໂລກ WTO ແລະປະຊາຄົມອາຊຽນ AEC ໃນປີ 2015.

ໂຄງການຫັນວຽກງານການເງິນເວົ້າລວມ ເວົ້າສະເພາະແມ່ນການຫັນເອົາວຽກງານສ່ວຍສາອາກອນໄປສູ່ຄວາມທັນສະໄໝນີ້ແມ່ນໂຄງການບຸລິມະສິດໜຶ່ງຂອງກະຊວງການເງິນ ຊຶ່ງຈະຫັນເອົາເຄື່ອງມືອີເລັກໂຕຣເຂົ້າມາຄຸ້ມຄອງຢ່າງເຕັມຮູບແບບ. ໂຄງການດັ່ງກ່າວນີ້ຊື່ວ່າ: ລະບົບສ່ວຍສາອາກອນທັນສະໄໝຂອງ ສປປ ລາວ ( Lao Electronic Tax System) ຂຽນຫຍໍ້ເປັນພາສາອັງກິດ LETS

ການນຳໃຊ້ ລະບົບ ອີເລັກໂທຣນິກ (LETS) ຂອງ ຂະແໜງສ່ວຍສາອາກອນ ລວມມີສອງເປົ້າໝາຍສຳຄັນຄື:

- ເປົ້າໝາຍທີໜຶ່ງ ແມ່ນເສີມຂະຫຍາຍການຈັດຕັ້ງປະຕິບັດຕາມໂຄງສ້າງ ຂອງວຽກງານສ່ວຍສາອາກອນທີ່ມີຢູ່ໃນປະຈຸບັນໃຫ້ທັນສະໄໝ ໃນ ສປປ ລາວ. ເພື່ອເປັນການສືບຕໍ່ການພັດທະນາປະເທດຊາດຢ່າງບໍ່ຢຸດຢັ້ງ, ດັ່ງນັ້ນ ຈຶ່ງຈຳເປັນຕ້ອງມີການວາງຍຸດທະສາດທັງໄລຍະສັ້ນ ແລະຍາວ ສ້າງໃຫ້ຂະແໜງສ່ວຍສາອາກອນມີຄວາມເຂັ້ມແຂງ ຮັບປະກັນໃຫ້ມີລາຍຮັບໃນລະດັບທີ່ໝັ້ນຄົງໃຫ້ແກ່ປະເທດຊາດ ແລະສາມາດຄາດຄະເນລາຍຮັບໄດ້ຢ່າງຊັດເຈນ. ເພື່ອຊຸກຍູ້ ສົ່ງເສີມໃຫ້ນັກທຸລະກິດຕ່າງປະເທດເຂົ້າມາລົງທຶນຢູ່ ສປປ ລາວໃຫ້ຫຼາຍຂຶ້ນ ແລະເພື່ອສ້າງຄວາມໝັ້ນຄົງທາງດ້ານເສດຖະກິດຂອງຊາດໃຫ້ສູງຂຶ້ນ.
- ເປົ້າໝາຍທີສອງ ແມ່ນໂຄງການດັ່ງກ່າວຈະໄດ້ນຳໃຊ້ລະບົບຄອມພິວເຕີທີ່ທັນສະໄໝ ເພື່ອຄຸ້ມຄອງ ຕິດຕາມ ລາຍຮັບສ່ວຍສາອາກອນ, ອຳນວຍຄວາມສະດວກໃຫ້ປະຊາຊົນທຸກຊັ້ນຄົນ ລວມເຖິງຜູ້ດຳເນີນທຸລະກິດໃຫ້ສາມາດເຂົ້າເຖິງ ການບໍລິການດ້ານການເກັບພັນທະສ່ວຍສາອາກອນຂອງລັດຖະບານ ຜ່ານລະບົບເຄື່ອງມືທີ່ທັນສະໄໝ. ຍິ່ງໄປກວ່ານັ້ນລະບົບທັນສະໄໝຈະເຮັດໃຫ້ເກີດຄວາມໂປ່ງໃສ ໃນການຄຸ້ມຄອງລາຍຮັບໃນແຕ່ລະຂັ້ນ, ສ້າງຄວາມໝັ້ນໃຈໃຫ້ແກ່ຜູ້ເສຍອາກອນ, ມີຄວາມຊັດເຈນໃນການບັງຄັບໃຊ້ລະບຽບກົດໝາຍຂອງພະນັກງານເທົ່າທຽມ ແລະເປັນເອກະພາບ.

ໂຄງການເລັດສ໌ (LETS) ຈະຖືກພັດທະນາເປັນສາມໄລຍະຄື:

<u>ໂຄງການໄລຍະທີ I</u>.

ພັດທະນາລະບົບເພື່ອໃຫ້ສາມາດຈັດຕັ້ງປະຕິບັດຄຸ້ມຄອງອາກອນຊົມໃຊ້ຍານພາຫະນະ, ຊຶ່ງຄາດຄະເນໃຫ້ໄດ້ເລີ່ມນຳໃຊ້ໃນວັນທີ 01 ຕຸລາ 2013 ແລະຈະມີຜົນບັງຄັບໃຊ້ ໃນວັນທີ 2 ທັນວາ 2013.

<u>ໂຄງການໄລຍະທີ II</u>

ພັດທະນາລະບົບຄຸ້ມຄອງເກັບອາກອນລາຍໄດ້ບຸກຄົນ, ນິຕິບຸກຄົນ ຊຶ່ງຄາດຄະເນການພັດທະນາ 1 ປີ ຈະໃຫ້ສາມາດນຳໃຊ້ ໃນວັນທີ 31 ທັນວາ 2014.

**ໂຄງການໄລຍະທີ III**

ພັດທະນາລະບົບຄຸ້ມຄອງເກັບອາກອນຈາກການບໍລິໂພກສິນຄ້າ ແລະ ການບໍລິການ ຊຶ່ງຄາດຄະເນການພັດທະນາ 1 ປີ ຈະໃຫ້ສາມາດນຳໃຊ້ ໃນວັນທີ 31 ທັນວາ 2015.

ສຳລັບໄລຍະທີໜຶ່ງ ກົມສ່ວຍສາອາກອນຮ່ວມກັບບໍລິສັດຄູ່ຮ່ວມພັດທະນາ ກຳລັງຊຸ້ນຂ້ຽວການພັດທະນາ ວາງແຜນໃນການກະກຽມນຳໃຊ້ລະບົບຄຸ້ມຄອງເກັບອາກອນຈາກຍານພາຫະນະ ທັນສະໄໝ (VETS) ໃນຂອບເຂດທົ່ວປະເທດ.

ເປົ້າໝາຍທີ່ສຳຄັນຂອງລະບົບການເກັບອາກອນຈາກຍານພາຫະນະ ຜ່ານທາງລະບົບອີເລັກໂທຣນິກ (VETS) ແມ່ນເພື່ອ:

- ປ່ຽນແທນໂຄງສ້າງຂອງອາກອນນຳເຂົ້າຍານພາຫະນະ ແລະອາກອນຊົມໃຊ້ຍານພາຫະນະທີ່ມີຢູ່ໃນປະຈຸບັນ.
- ຈັດຕັ້ງປະຕິບັດເກັບລາຍຮັບອາກອນແບບໃໝ່ ເພື່ອເຮັດສາມາດຄາດຄະເນລາຍຮັບໃນລະດັບທີ່ໝັ້ນຄົງ.
- ຫຼຸດຜ່ອນອັດຕາໃນລະດັບທີ່ມີຄວາມຍຸຕິທຳ ແລະປະຕິບັດຕາມກົດໝາຍ ວ່າດ້ວຍສ່ວຍສາອາກອນ ຂອງສປປ ລາວ.
- ຄຸ້ມຄອງເກັບລາຍຮັບສ່ວຍສາອາກອນຜ່ານລະບົບອີເລັກໂທຣນິກທີ່ທັນສະໄໝ ໃນຂອບເຂດທົ່ວປະເທດ:
- ໃຫ້ມີການບັນທຶກຂໍ້ມູນຜ່ານທາງອີເລັກໂທຣນິກແບບລວມສູນ ສູນກາງຂໍ້ມູນ.
- ສົ່ງເສີມການເຂົ້າເຖິງການບໍລິການຜ່ານທາງອີເລັກໂທຣນິກໃຫ້ມີຄວາມສະດວກ ແລະໂປ່ງໃສ ໃນການເຄື່ອນໄຫວທຸລະກຳຜ່ານບັນຊີທະນາຄານ.
- ເປັນເຄື່ອງມືຄຸ້ມຄອງ ແລະຮັບໃຊ້ໃນການປະຕິບັດຕາມລະບຽບກົດໝາຍຢ່າງເປັນເອກະພາບ.

ຂະບວນການ ແລະວຽກງານສຳຄັນທີ່ກຳລັງຈະມາເຖິງສຳລັບໂຄງການເລັດສ໌ (LETS) ໄລຍະທີ 1 ລວມມີ:

- ເລີ່ມການທົດລອງ ໃຊ້ລະບົບເຈັນແທັກຊ໌ ໃນວັນທີ 29 ກໍລະກົດ 2013.
- ເລີ່ມຝຶກອົບຮົມຄູຝຶກ ໃນວັນທີ 19 ສິງຫາ 2013.
- ເລີ່ມຝຶກອົບຮົມຜູ້ນຳໃຊ້ລະບົບເຈັນແທັກຊ໌ ໃນວັນທີ 26 ສິງຫາ 2013.
- ພະນັກງານກະຊວງການເງິນຈະເລີ່ມຈັດຕັ້ງປະຕິບັດໂຄງການເລັດສ໌ (LETS) ໃນວັນຈັນ ວັນທີ 30 ກັນຍາ 2013.

ໂຄງການພັດທະນາລະບົບ LETS